ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ | ເລກທີ **1197**/ອຄ

ນະຄອນຫຼວງວຽງຈັນ, ວັນທີ 08 ກັນຍາ 2022

# ຂໍ້ຕົກລົງ
## ວ່າດ້ວຍ ການມອບສິດໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດ

- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ດໍາລັດວ່າດ້ວຍແຫຼ່ງກໍາເນີດສິນຄ້ານໍາເຂົ້າ ແລະ ສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010;
- ອີງຕາມ ໜັງສືສະເໜີຂອງ ກົມການນໍາເຂົ້າ ແລະ ສົ່ງອອກ ສະບັບເລກທີ 2638/ກຂອ, ລົງວັນທີ 30 ສິງຫາ 2022.

## ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ອອກຂໍ້ຕົກລົງ:

**ມາດຕາ 1** ມອບສິດໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ປະເພດຕ່າງໆ ດັ່ງນີ້:

1.1 ແບບພິມ ເອ (Form A) ອອກໃຫ້ແກ່ສິນຄ້າທີ່ໄດ້ເງື່ອນໄຂລະບຽບແຫຼ່ງກໍາເນີດສິນຄ້າພາຍໃຕ້ ສິດທິພິເສດທາງການຄ້າແບບທົ່ວໄປ;

1.2 ແບບພິມ ດີ (Form D) ອອກໃຫ້ແກ່ສິນຄ້າທີ່ໄດ້ເງື່ອນໄຂລະບຽບແຫຼ່ງກໍາເນີດສິນຄ້າພາຍໃຕ້ ສັນຍາການຄ້າດ້ານສິນຄ້າອາຊຽນ;

1.3 ແບບພິມ ເອສ໌ (Form S) ອອກໃຫ້ແກ່ສິນຄ້າທີ່ໄດ້ເງື່ອນໄຂລະບຽບແຫຼ່ງກໍາເນີດສິນຄ້າພາຍໃຕ້ ສັນຍາການຄ້າ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ແລະ ລັດຖະບານແຫ່ງ ສສ ຫວຽດນາມ;

1.4 ແບບພິມ ດີເອັຟທີພີ (Form DFTP) ອອກໃຫ້ແກ່ສິນຄ້າທີ່ໄດ້ເງື່ອນໄຂລະບຽບແຫຼ່ງກໍາເນີດສິນຄ້າ ພາຍໃຕ້ ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ປະເທດອິນເດຍ;

1.5 ແບບພິມ ເອພີທີເອ (Form APTA) ອອກໃຫ້ແກ່ສິນຄ້າທີ່ໄດ້ເງື່ອນໄຂລະບຽບແຫຼ່ງກໍາເນີດສິນຄ້າ ພາຍໃຕ້ ສັນຍາການຄ້າ ອາຊີ-ປາຊີຟິກ;

1.6 ແບບພິມ ເອໄອ (Form AI) ອອກໃຫ້ແກ່ສິນຄ້າທີ່ໄດ້ເງື່ອນໄຂລະບຽບແຫຼ່ງກໍາເນີດສິນຄ້າພາຍໃຕ້ ສັນຍາເຂດການຄ້າເສລີ ອາຊຽນ-ອິນເດຍ;

1.7 ແບບພິມ ເອເຮັດເຄ (Form AHK) ອອກໃຫ້ແກ່ສິນຄ້າທີ່ໄດ້ເງື່ອນໄຂລະບຽບແຫຼ່ງກໍາເນີດສິນຄ້າພາຍໃຕ້ ສັນຍາເຂດການຄ້າເສລີ ອາຊຽນ-ຮົງກົງ, ສປ ຈີນ;

1.8 ແບບພິມ ອາຊີອີພີ (Form RCEP) ອອກໃຫ້ແກ່ສິນຄ້າທີ່ໄດ້ເງື່ອນໄຂລະບຽບແຫຼ່ງກໍາເນີດສິນຄ້າພາຍໃຕ້ ສັນຍາການຮ່ວມມືເສດຖະກິດແບບຮອບດ້ານລະດັບພາກພື້ນ.

**ມາດຕາ 2** ການພິຈາລະນາອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ໃຫ້ປະຕິບັດຕາມຄໍາແນະນໍາກ່ຽວກັບການຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ທີ່ປະກາດໃຊ້ໃນແຕ່ລະໄລຍະ ແລະ ເງື່ອນໄຂລະບຽບແຫຼ່ງກໍາເນີດສິນຄ້າ ຕາມທີ່ໄດ້ກໍານົດໄວ້ໃນແຕ່ລະຂອບສັນຍາ.

**ມາດຕາ 3** ມອບໃຫ້ ກົມການນໍາເຂົ້າ ແລະ ສົ່ງອອກ ເປັນເຈົ້າການສົມທົບ ແລະ ຊີ້ນໍາ ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບປະສິດທິຜົນສູງ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການມອບສິດໃຫ້ພະແນກອຸດສາຫະກໍາ ແລະ ການຄ້າໃນທົ່ວປະເທດອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດພິເສດ ສະບັບເລກທີ 2036/ອຄ.ກຂອ, ລົງວັນທີ 12 ຕຸລາ 2010 ແລະ ຂໍ້ຕົກລົງວ່າດ້ວຍການມອບສິດໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ນະຄອນຫຼວງວຽງຈັນ ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ສິດພິເສດ ສະບັບເລກທີ 1880/ອຄ.ກຂອ, ລົງວັນທີ 05 ກັນຍາ 2012.

ລັດຖະມົນຕີ

ມະໄລທອງ ກົມມະສິດ